ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ທະນາຄານແຫ່ງສປປລາວ

ເລກທີ: 05/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 ພຶດສະພາ 2018

ສຳນັກງານ ຄຄຊ
ເລກທີ...0533......
ວັນທີ..17.MAY..2018
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ເມສາ ປີ 2018 ແລະ ທິດທາງແຜນການໃນຕໍ່ໜ້າ

### ພາກທີ I

### ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

**I.ວຽກງານການເມືອງ-ແນວຄິດ**

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ເມສາ 2018 ແລະ ທິດທາງແຜນການໃນເດືອນ ພຶດສະພາ 2018 ດັ່ງລາຍລະອຽດລຸ່ມນີ້:

**II.ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.**

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ ແລະ ພິທີຕ່າງໆ: ເຂົ້າຮ່ວມກອງປະຊຸມລັດຖະບານປະຈຳເດືອນ ເມສາ 2018; ກອງປະຊຸມທ່ານນາຍົກ-ຮອງນາຍົກລັດຖະມົນຕີປະຈຳເດືອນ ເມສາ 2018; ກອງປະຊຸມຮ່ວມກັບຄະນະປະຈຳສະພາແຫ່ງຊາດ ເພື່ອນຳສະເໜີການປັບປຸງກົດໝາຍວ່າດ້ວຍ ທຫລ; ກອງປະຊຸມປຶກສາຫາລືກ່ຽວກັບກົນໄກການປ່ອຍເງິນກູ້ຢືມບ້ວງ 30 ລ້ານໂດລາສະຫາລັດ ຂອງກຸ່ມບໍລິສັດ ດາວເຮືອງ ຈຳກັດ; ກອງປະຊຸມລະດັບລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 4 ແລະ ກອງປະຊຸມລະດັບສູງວຽກງານອາຊຽນ+3 ທີ່ປະເທດສິງກະໂປ;
- ສຳເລັດການຈັດກອງປະຊຸມຕ່າງໆ ແລະ ພິທີຕ່າງໆ: ກອງປະຊຸມເປີດກວ້າງຄະນະບໍລິຫານງານພັກ ທຫລ ຄັ້ງທີ 6 ສະໄໝທີ III ປີ 2018; ກອງປະຊຸມສະຫຼຸບສ່ອງແສງປະຈຳໄຕມາດ I ປີ 2018 ຂອງຄະນະບໍລິຫານງານ ຊປປລ ກະຊວງ, ອົງການອ້ອມຂ້າງສູນກາງ ຊປປລ ແລະ ນະຄອນຫຼວງວຽງຈັນ; ກອງປະຊຸມກະກຽມເອກະສານລາຍງານ ຫສນຍ ເພື່ອກະກຽມລາຍງານຕໍ່ສູນກາງ ແລະ ສະພາແຫ່ງຊາດ; ກອງປະຊຸມວຽກງານກວດກາທະນາຄານແຫ່ງ ສປປ ລາວ ປະຈຳປີ 2017; ກອງປະຊຸມນຳສະເໜີຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ); ກອງປະຊຸມຄະນະຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ; ກອງປະຊຸມຄະນະຮັບຜິດຊອບເນື້ອໃນກະກຽມການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບ ຮອບ 50 ປີ; ກອງປະຊຸມເຜີຍແຜ່ມາດຕະຖານການຈັດລຳດັບໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ກອງປະຊຸມສຳມະນາເຜີຍແຜ່ແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາແຊວແຕ່ປີ 2017-2025; ກອງປະຊຸມສຳມະນາວຽກງານປະກັນໄພເງິນຝາກ; ຈັດພິທີອວຍພອນ ແລະ ບາສີສູ່ຂວັນຄະນະນຳ ທຫລ ເນື່ອງໃນໂອກາດປີໃໝ່ລາວ;

– ສຳເລັດການຕ້ອນຮັບແຂກເຂົ້າພົບປະຄະນະນຳ ທຫລ ຂອງທະນາຄານເພື່ອການກະເສດ ແລະ ສະຫະກອນກະເສດ ປະເທດໄທ; ທ່ານ ລູຟູສ ປິນໂຕ ຜູ້ອຳນວຍການທະນາຄານ ເອເອັນແຊັດລາວ;

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

– ໃນເດືອນ 04/2018 ສະພາບເສດຖະກິດໂລກໂດຍລວມສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ ໂດຍໄດ້ແຮງພັກດັນຈາກການລົງທຶນທີ່ເຂັ້ມແຂງ ແລະ ການຈ້າງງານທີ່ເພີ່ມຂຶ້ນ ຊຶ່ງຈະຊ່ວຍໃຫ້ເສດຖະກິດຟື້ນຕົວໃນວົງກວ້າງ. ພິເສດສະພາບພົ້ນເດັ່ນໃນເດືອນນີ້ ແມ່ນປະເທດ ສ. ອາເມລິກາ ໄດ້ປະກາດເພີ່ມອັດຕາພາສີນຳເຂົ້າສິນຄ້າຈາກບັນດາປະເທດໃນໂລກ. ສິ່ງດັ່ງກ່າວຈະເປັນປັດໃຈເພີ່ມແຮງກົດດັນຕໍ່ພາກການຄ້າ ແລະ ລາຄາສິນຄ້າໃນຕະຫຼາດສາກົນອາດຈະປັບເພີ່ມຂຶ້ນ. ເຖິງຢ່າງໃດກໍ່ຕາມ,ອັດຕາເງິນເຟີ້ ຄາດວ່າຈະເພີ່ມຂຶ້ນ ຢູ່ໃນລະດັບ 1,9% ສຳລັບປະເທດທີ່ພັດທະນາແລ້ວ ແລະ 4,5% ສຳລັບປະເທດກຳລັງພັດທະນາ-ເສດຖະກິດເກີດໃໝ່. ພ້ອມນັ້ນ, ສຳລັບລາຄານ້ຳມັນໃນປີ 2018 ຄາດວ່າຈະເພີ່ມຂຶ້ນໃນລະດັບ 11,7%.

– ສຳລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າຂຶ້ນ 0,10% ທຽບໃສ່ເງິນເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກຍອດຜະລິດຕະພັນພາຍໃນຂອງໄຕມາດ 04/2017 ເພີ່ມຂຶ້ນຢູ່ທີ່ລະດັບ 2,9% ຈາກ 2,5% ໃນໄຕມາດຜ່ານມາ ແລະ ຕົວເລກຍອດສັ່ງຊື້ສິນຄ້າຄົງທົນຂອງເດືອນ 02/2018 ເພີ່ມຂຶ້ນ 3,1% ຈາກຫຼຸດລົງ 3,5% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຕົວເລກຍອດຂາຍເຮືອນປະຈຳຂອງເດືອນ 02/2018 ເພີ່ມຂຶ້ນມາເປັນ 3,0% ຈາກທີ່ເຄີຍຫຼຸດລົງ 3,2% ໃນເດືອນຜ່ານມາ.

– ສ່ວນລາຄານ້ຳມັນເພີ່ມຂຶ້ນ 3,77% ຈາກ 61,22 ໂດລາ/ບາເຣວ ມາເປັນ 63,53 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງ 4,62 ລ້ານບາເຣວ ຂອງອາທິດທີ 30/03/2018, ຈາກເພີ່ມຂຶ້ນ 1,64 ລ້ານບາເຣວ ໃນອາທິດຜ່ານມາ. ພ້ອມກັນນັ້ນ, ຜູ້ຜະລິດທັງໃນ ແລະ ນອກກຸ່ມໂອເປັກ ຍັງສືບຕໍ່ຮ່ວມມືກັນປັບຫຼຸດກຳລັງການຜະລິດນ້ຳມັນດິບລົງ ສິ່ງຜົນໃຫ້ປະລິມານນ້ຳມັນຂອງກຸ່ມໂອເປັກໃນເດືອນ 3/2018 ຢູ່ລະດັບຕ່ຳສຸດໃນຮອບ 11 ເດືອນເຊິ່ງປະເທດທີ່ມີການປັບຫຼຸດຕົ້ນຕໍແມ່ນປະເທດແອງໂກລາ, ລີເບຍ ແລະ ເວເນຊູເອລ່າ. ໃນດ້ານລາຄາຄຳເພີ່ມຂຶ້ນ 0,11% ຈາກ 1.329,99 ໂດລາ/ອອນ ມາເປັນ 1.331,46 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

### 2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 04/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,70% ເພີ່ມຂຶ້ນຈາກ 1,91% ໃນເດືອນ 3/2018. ສາເຫດຕົ້ນຕໍຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາໝວດສະບຽງອາຫານ ແລະ ໝວດເຄື່ອງນຸ່ງຫົ່ມ-ເກີບ ມາຢູ່ໃນລະດັບ 1,36% ແລະ 4,23% ຕາມລຳດັບ (ຈາກ 0,95% ແລະ 3,68% ຂອງເດືອນຜ່ານມາ);

– ຖານເງິນຕາປະຈຳເດືອນ 04/2018 ເພີ່ມຂຶ້ນ 1.430,20 ຕື້ກີບ ຫຼື 3,64% ທຽບໃສ່ເດືອນ 03/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 4.003 ຕື້ກີບ ຫຼື 11,01%. ປະລິມານເງິນ M2 ເພີ່ມຂຶ້ນ 1.274,63 ຕື້ກີບ ຫຼື 1,57% ທຽບໃສ່ເດືອນ 03/2018 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 8.325,34 ຕື້ກີບ ຫຼື 11,23%;

– ອັດຕາແລກປ່ຽນທົ່ວລະບົບໃນເດືອນ 04/2018 ທຽບເດືອນ 03/2018 ເໜັງຕີງໃນຂອບທີ່ກຳນົດໄວ້ ຊຶ່ງເຫັນໄດ້ຈາກເງິນກີບອ່ອນຄ່າລົງເມື່ອທຽບໃສ່ເງິນໂດລາ 0,13% ແລະ ອ່ອນຄ່າ 0,77% ທຽບໃສ່ເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງເມື່ອທຽບກັບເງິນໂດລາ 0,03% ແລະ ອ່ອນຄ່າ 4,33% ທຽບກັບເງິນບາດ.

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 04/2018 (13/03/2018-12/04/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດເພີ່ມຂຶ້ນ 38,93% ຖ້າທຽບໃສ່ເດືອນ 03/2018. ທທກ ຂາຍເງິນຕາຕ່າງປະເທດສຸດທິ 4,19 ລ້ານໂດລາທຽບເທົ່າ (ໃນນັ້ນ, ຊື້ເງິນໂດລາສຸດທິ 58,11 ລ້ານໂດລາ, ແຕ່ຂາຍເງິນບາດສຸດທິ 1.886,36 ລ້ານບາດ ຫຼື 62,30 ລ້ານໂດລາທຽບເທົ່າ). ນອກນັ້ນ, ເພື່ອດຸ່ນດ່ຽງຕະຫຼາດເງິນຕາຕ່າງປະເທດ ທຫລ ໄດ້ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 40,69 ລ້ານໂດລາ. ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນຈຳນວນ 37,77 ລ້ານໂດລາທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາ 25,34 ລ້ານໂດລາ ແລະ ເງິນບາດ 376,50 ລ້ານບາດ ຫຼື 12,43 ລ້ານໂດລາ);

– ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານປະຈຳເດືອນ 04/2018 (13/03/2018-12/04/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 36,97 ລ້ານໂດລາສະຫະລັດ.ໃນນັ້ນ, ກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 926,12 ລ້ານໂດລາສະຫະລັດ ເພື່ອຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 525,72 ລ້ານໂດລາສະຫະລັດ; ຊຳລະຄ່າບໍລິການ ຈຳນວນ 208,89 ລ້ານໂດລາສະຫະລັດ, ຊຳລະເງິນກູ້ພາກລັດຖະບານ ຈຳນວນ 72,06 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ພາກຫົວໜ່ວຍທຸລະກິດ ຈຳນວນ 49,72 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 889,15 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການບໍລິການ ຈຳນວນ 392,47 ລ້ານໂດລາສະຫະລັດ, ຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 224,95 ລ້ານໂດລາສະຫະລັດ ແລະ ຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 179,18 ລ້ານໂດລາສະຫະລັດ.

3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/04/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 70.473,29 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,97% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,52%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 0,72% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,29% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 1,18% ຊຶ່ງກວມເອົາ 53,71% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/04/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 65.835,95 ຕື້ກີບ ຫຼຸດລົງ 2,38% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 6,91%. ສິນເຊື່ອເປັນເງິນກີບກວມເອົາ 47,36% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດກວມເອົາ 52,64% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 2,06 ຕື້ກີບ ທຽບໃສ່ເດືອນຜ່ານມາຫຼຸດລົງ 32,23**%,** ເກັບຕົ້ນທຶນໄດ້ 8,70 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 40,77% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 04/2018 ມີຈຳນວນ 3.129,51 ຕື້ກີບ ເທົ່າກັບ 95,44% ຂອງແຜນການ (3.278,95 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.081,21 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 326,67 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 291,46 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 430,17 ຕື້ກີບ.

4. <u>ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ</u>

**4.1.** <u>ການເຄື່ອນໄຫວຊຳລະສະສາງ</u>

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີ ຈຳນວນ 2.870 ສະບັບ ຫຼຸດລົງ 8,30% ເປັນເງິນຈຳນວນ 1.492,99 ຕື້ກີບ ຫຼຸດລົງ 7,49% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີ ຈຳນວນ 203 ຄັ້ງ ເພີ່ມຂຶ້ນ 26,08% ເມື່ອທຽບໃສ່ເດືອນຜ່ານມາ, ມີມູນຄ່າການໂອນ 952,79 ຕື້ກີບ

ເພີ່ມຂຶ້ນ 31,90% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/03-24/04/2018 ມີຈໍານວນ 15.411 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 15.086 ຄັ້ງ ມີມູນຄ່າການໂອນ 5.971,17 ຕື້ກີບ ເພີ່ມຂຶ້ນ 13,63% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວມະຫາຊົນເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 4.261 ຄັ້ງ. ໃນນັ້ນມີ 42 ພາກສ່ວນທີ່ເຮັດທຸລະກໍາ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

– **ກະຊວງການເງິນ:** ມີການເຄື່ອນໄຫວຈໍານວນ 325 ຄັ້ງ ມີມູນຄ່າການໂອນ 985,28 ຕື້ກີບ ເພີ່ມຂຶ້ນ 23,33%.

**4.2ການຊື້-ຂາຍພັນທະບັດ**

– ໃນເດືອນ 04/2018 ພັນທະບັດກະຊວງການເງິນໄດ້ມີການຈໍາໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈໍານວນ 601 ຕື້ກີບ.ໃນນັ້ນ, ຈໍາໜ່າຍໃຫ້ທະນາຄານພັດທະນາລາວ ຈໍານວນ 150 ຕື້ກີບ; ທະນາຄານພົງສະຫວັນ ຈໍານວນ 1 ຕື້ກີບ; ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈໍານວນ 450 ຕື້ກີບ ແລະ ໄຖ່ຖອນພັນທະບັດ ຈໍານວນ 756 ຕື້ກີບ. ໃນນັ້ນ, ໄຖ່ຖອນພັນທະບັດບ້ວງລະດົມທຶນ ທທກ ໂດຍກົງໃຫ້ທະນາຄານອຸດສະຫະກໍາ ແລະ ການຄ້າ ສປ ຈີນ ຈໍານວນ 130 ຕື້ກີບ ແລະ ໄຖ່ຖອນພັນທະບັດ ບ້ວງລະດົມທຶນຈໍາໜ່າຍຜ່ານ ທຫລ 626 ຕື້ກີບ (ບ້ວງ ທຫລ ບໍ່ຄໍ້າປະກັນ ຈໍານວນ 620 ຕື້ກີບ: ທະນາຄານພັດທະນາລາວ ຈໍານວນ 150 ຕື້ກີບ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ຈໍານວນ 450 ຕື້ກີບ, ທະນາຄານ ST ຈໍານວນ 10 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈໍານວນ 10 ຕື້ກີບ ແລະ ບ້ວງ ຄໍ້າປະກັນ ຈໍານວນ 6 ຕື້ກີບ ໃຫ້ທະນາຄານພັດທະນາລາວ);

– ພັນທະບັດຂອງກະຊວງການເງິນມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.756,20 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 24 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.663 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 3.069,20 ຕື້ກີບ);

– ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 04/2018 ບໍ່ມີການຈໍາໜ່າຍ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ ແລະ ຈ່າຍດອກເບ້ຍພັນທະບັດໃຫ້ທະນາຄານອຸດສະຫະກໍາ ແລະ ການຄ້າ ສປ ຈີນ ຈໍານວນ 0,29 ລ້ານໂດລາສະຫະລັດ ແລະ ທະນາຄານແຫ່ງປະເທດຈີນ ຈໍານວນ 1,48 ລ້ານໂດລາສະຫະລັດ.

**5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 954,31 ຈຸດ ເພີ່ມຂຶ້ນ 2,67% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 7,14% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1.186.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6,84 ຕື້ກີບ ຫຼຸດລົງ 47,13% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 31,27% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການເພີ່ມຂຶ້ນຂອງດັດຊະນີຕະຫຼາດຫຼັກຊັບລາວ ແມ່ນມາຈາກການປັບຕົວຂຶ້ນຂອງລາຄາຮຸ້ນ EDL-Gen ແລະ PCD ເຊິ່ງເປັນຜົນມາຈາກການຊື້ຮຸ້ນຂອງຜູ້ລົງທຶນທີ່ກວມເອົາ 51,74% ຂອງມູນຄ່າການຊື້-ຂາຍທັງໝົດ.

– ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ (BCEL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 5.350 ກີບ/ຮຸ້ນ ຫຼຸດລົງ 450 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.085.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6,42 ຕື້ກວ່າກີບ ເພີ່ມຂຶ້ນ 25,84% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວມະຫາຊົນ (EDL-Gen) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 4.700 ກີບ/ຮຸ້ນ ເພີ່ມຂຶ້ນ 400 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 85.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 378,67 ລ້ານກວ່າກີບ ຫຼຸດລົງ 85,08% ເມື່ອທຽບໃສ່ເດືອນຜ່ານມາ. ສາເຫດຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ;

– ຮຸ້ນຂອງບໍລິສັດລາວເວີນມະຫາຊົນ (LWPC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າ ຄື: 4.000 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 25,80 ລ້ານກີບ ຫຼຸດລົງ 99,51% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດປິໂຕຣລ້ຽມເທຣດດິ້ງລາວມະຫາຊົນ (PTL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.700 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,17 ລ້ານກີບ ຫຼຸດລົງ 77,24% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ (SVN) ມີລາຄາຊື້-ຂາຍປິດຕົວຢູ່ທີ່ລະດັບເກົ່າຄື: 2.900 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແລະ ບໍ່ມີການເຄື່ອນໄຫວຊື້-ຂາຍຮຸ້ນໃນເດືອນນີ້ ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດພູສີກໍ່ສ້າງມະຫາຊົນ (PCD) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.450 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,78 ລ້ານກວ່າກີບ ຫຼຸດລົງ 56,77% ເມື່ອທຽບໃສ່ເດືອນຜ່ານມາ. ສາເຫດຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ;

– ຮຸ້ນຂອງບໍລິສັດຊີມັງລາວ (LCC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.350 ກີບ/ຮຸ້ນ ຫຼຸດລົງ 200 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 3.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,50 ລ້ານກີບ ຫຼຸດລົງ 80,47% ເມື່ອທຽບໃສ່ເດືອນຜ່ານມາ.

## 6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນເຂົ້າ ສປປ ລາວ ຈໍານວນ 180,88 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 16% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈໍານວນ 154,70 ລ້ານໂດລາສະຫະລັດ ກວມເອົາ 86% ຂອງເງິນທັງໝົດ, ເງິນບາດ 812 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນຕາຕ່າງປະເທດອອກນອກ ສປປ ລາວ ຈໍານວນ 433,92 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 120% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈໍານວນ 367,83 ລ້ານໂດລາສະຫະລັດ ກວມເອົາ 85% ຂອງເງິນທັງໝົດ, ເງິນບາດ 1,82 ຕື້ບາດ, 13.830 ເອີໂຣ, 9.580 ຝຣັ່ງສະວິດ, 3.660 ປອນສະເຕີລິງ, 21,88 ລ້ານເຢັນ, 65.220 ໂດລາການາດາ, 133.290 ໂດລາອົດສະຕາລີ, 13.719 ໂດລາສິງກະໂປ, 5.250 ໂດລານິວຊີແລນ ແລະ 15 ຕື້ດົ່ງຫວຽດນາມ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສໍາເລັດການອອກແຈ້ງການເຖິງທະນາຄານທຸລະກິດທົ່ວລະບົບ ກ່ຽວກັບການເພີ່ມທະວີວຽກງານປ້ອງກັນຄວາມປອດໄພຂອງຕູ້ ATM ຂອງທະນາຄານ; ສໍາເລັດການລົງກວດກາປະຈໍາປີ 2018 ທະນາຄານທຸລະກິດ ຈານວນ 2 ແຫ່ງ ແລະ ສືບຕໍ່ລົງກວດກາ ຈໍານວນ 02 ທະນາຄານ; ສໍາເລັດການອອກໃບອະນຸຍາດດໍາເນີນທຸລະກິດຖາວອນໃຫ້ແກ່ ສກຈບ ໂຊກໄຊຊະນະ; ສໍາເລັດການລົງກວດກາປະຈໍາສົກປີ 2017-2018 ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທົບທົບ, ສສງ ກາສີ, ສສງ ວັງວຽງ ແລະ ສສງ ລາວໂທລະຄົມ;

– ໄດ້ສໍາເລັດໂດຍພື້ນຖານຜ່ານເນື້ອໃນຮ່າງນິຕິກໍາຕ່າງໆຄື: ຂໍ້ຕົກລົງວ່າດ້ວຍບໍລິສັດຄໍ້າປະກັນສິນເຊື່ອ ເພື່ອວິສາຫະກິດຂະໜາດນ້ອຍ ແລະ ກາງ; ກອງປະຊຸມປົກປ້ອງຜູ້ບໍລິໂພກທາງການເງິນ;

– ໄດ້ຮັບທະນະບັດປອມປະເພດໃບ 100.000 ກີບ ຈໍານວນ 01 ໃບ ຈາກທະນາຄານທຸລະກິດ;

– ໄດ້ຮັບສໍານວນທຸລະກໍາທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈໍານວນ 07 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 741 ສະບັບ.

<u>ພາກທີ II</u>

## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບ, ຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນມູນຄ່າຍ່ອຍ; ຂໍ້ຕົກລົງວ່າດ້ວຍການກວດສອບພາຍນອກ; ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍກິດຈະກຳການເຄື່ອນໄຫວຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ບັນດານິຕິກຳລຸ່ມດຳລັດວ່າດ້ວຍການປົກປ້ອງເງິນຝາກ;

– ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ;

– ສືບຕໍ່ກະກຽມຈັດກອງປະຊຸມ ແລະ ພິທີການຕ່າງໆ ຄື: ❶ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງບັນດາຮາກຖານພັກ ເພື່ອກຳນົດທິດທາງ, ແຜນການ 2 ປີ ຕໍ່ໜ້າ; ❷ກອງປະຊຸມພົບປະລະຫວ່າງກົມຄຸ້ມຄອງທະນາຄານທຸລະກິດ ແລະ ບັນດາທະນາຄານທຸລະກິດທົ່ວລະບົບ ກ່ຽວກັບວຽກງານຄຸ້ມຄອງ-ກວດກາ ປະຈຳປີ 2017; ❸ພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ; ❹ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2018 ແລະ ❺ກອງປະຊຸມປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

– ກະກຽມເຂົ້າຮ່ວມກອງປະຊຸມ ແລະ ພິທີການຕ່າງໆ ຄື: ❶ກອງປະຊຸມ (ADB) ປະຈຳປີ 2018 ຄັ້ງທີ 51; ❷ກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3 (AFCDM+3) ແລະ ❸ກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3 (AFMGM+3) ທີ່ປະເທດຟີລິບປິນ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ຜູ້ວ່າການ



ສົມພາວ ໄຟສິດ